**ບໍລິສັດກວດສຸຂະພາບເຄື່ອນທີ່**
ນຳສະເໜີທາງເລືອກໃຫ້ຜູ້ສະໝັກໄດ້ເຮັດການກວດສອບປະຫວັດສຸຂະພາບໃນບ່ອນທີ່ສະບາຍ ແລະ ສະດວກໃນບ້ານຫຼື ບ່ອນເຮັດວຽກຂອງພວກເຂົາເອງ, ຫຼື ໃນສະຖານທີ່ ຫຼື ຄລີນິກທີ່ມີສັນຍາ.
ຜູ້ຊ່ຽວຊານດ້ານສຸຂະພາບ ຫຼື, ໃນບາງກໍລະນີ, ທ່ານໝໍຈະເປັນຜູ້ກວດສຸຂະພາບເຊິ່ງອາດລວມມີ:

- ການເກັບຕົວຢ່າງເລືອດໄປກວດ
- ການເກັບຕົວຢ່າງຍ່ຽວໄປກວດ
- ຄວາມດັນເລືອກ
- ການກວດຫົວໃຈໂດຍກະແສໄຟຟ້າ(EKG)
- ປະຫວັດສຸຂະພາບ
- ຄວາມສູງ ແລະ ນ້ຳໜັກ
- ວັດແທກສະໂພກ ແລະ ແອວ
- ຊີບພະຈອນ
- ກວດສຸຂະພາບຮ່າງກາຍ
- ໂກພາຣາມ– ວິທີທາງອີເລັກໂຕຣສຳຫຼັບເກັບກຳປະຫວັດທາງການແພດ

ບໍລິສັດກວດສຸຂະພາບເຄື່ອນທີ່
ສາມາດໃຫ້ບໍລິການກວດສອບສຸຂະພາບ
ໃນທົ່ວປະເທດ.

ກະລຸນາຖືໃບແນະນຳການບໍລິການນີ້ຕິດຕົວທ່ານເພື່ອວ່າທ່ານຈະສາມາດຕື່ມ ວັນທີ ແລະ ເວລາ ຂອງການນັດພົບກັບຜູ້ກວດ.

ກະລຸນາທົບທວນ "ເຄັດລັບສຳຄັນ" ກ່ອນໄປກວດສຸຂະພາບ

ຂໍ້ ມູນ ກ່ຽວ
ກັບການນັດພົບກັບຜູ້ກວດສຸຂະພາບ

ວັນທີ:______________________________

ເວລາ:______________________________

ຊື່ ຜູ້ຊ່ຽວຊານດ້ານ
ສຸຂະພາບ: ______________________________

ໝາຍເລກຜູ້ຊ່ຽວຊານດ້ານ
ສຸຂະພາບ: ______________________________

ອີເມລ ຜູ້ຊ່ຽວຊານດ້ານ
ສຸຂະພາບ l: ______________________________

ຖ້າທ່ານມີຄຳຖາມກ່ຽວກັບການນັດໝາດ ຫຼື ການກວດສຸຂະພາບ ກະລຸນາຕິດຕໍ່ ບໍລິສັດກວດສຸຂະພາບເຄື່ອນທີ່ ຫຼື ຄູ່ສັນຍາອິດສະຫຼະໄດ້ໂດຍກົງ.

SUPERIOR
Mobile Insurance Solutions

**ຂໍ້ມູນທີ່ຢູ່ຫ້ອງການປະສານງານ:**
Phone 800-898.ເອັກຊາມ(3926)
Fax 888.548.3926
ອີເມວ: cs@smminsurance.com

**ທີ່ຢູ່**
3838 Camino Del rio N., Suite 250
San Diego, CA 92108

**ທີ່ຢູ່ໄປສະນີ**
P.O. Box 639014
San Diego, CA 92163-9014

**ເວລາບໍລິການລູກຄ້າ**
ວັນຈັນ – ວັນສຸກ: 6:00 AM – 5:00 PM (PST)

SUPERIOR
Mobile Insurance Solutions

# ກະກຽມສຳຫຼັບການກວດສຸຂະພາບ

800.898.EXAM (3926)
619.299.3926
Fax 888.548.3926
www.smminsurance.com

## ການກວດສອບປະຫວັດສຸຂະພາບ

ກ່ອນອອກນະໂຍບາຍໃຫ້ທ່ານ, ບໍລິສັດປະກັນໄພຕ້ອງການຂໍ້ມູນດ້ານສຸຂະພາບຂອງທ່ານ, ເຊິ່ງເປັນຜູ້ສະມັກ. ຜູ້ຊ່ຽວຊານທາງສຸຂະພາບທີ່ໄດ້ຮັບການຮັບປະກັນເປັນຜູ້ເກັບກຳຂໍ້ມູນນີ້ໃນລະຫວ່າງການກວດສຸຂະພາບ. ການກວດສອບປະຫວັດສຸຂະພາບປະກອບມີການຖາມຄຳຖາມ ຈຳນວນໜຶ່ງກ່ຽວກັບປະຫວັດການປິ່ນປົວ, ລວງສູງແລະນ້ຳໜັກ, ຊີບພະຈອນ ແລະ ຄວາມດັນເລືອດຂອງທ່ານ. ນອກນັ້ນ, ຕົວຢ່າງ ນ້ຳຍ່ຽວ ແລະເລືອດ ອາດຈະຖືກເກັບເອົາໄປກວດອີກ. ທ່ານຄວນກຽມຕົວຕອບບັນດາຄຳຖາມ ກ່ຽວກັບປະຫວັດການປິ່ນປົວ ສຸຂະພາບຂອງ ຄອບຄົວທ່ານ. ການກວດສອບປະຫວັດ ປົກກະຕິແລ້ວ ຈະໃຊ້ເວລາ 30 ຫາ 45 ນາທີ ຈຶ່ງສຳເລັດ.

ຄູ່ສັນຍາອິດສະຫຼະທາງການແພດຈະເປັນຄົນຕິດຕໍ່ທ່ານເພື່ອນັດໝາຍກັບທ່ານໃນມື້ທີ່ໄວທີ່ສຸດທີ່ທ່ານສະດວກ. ການພົບປະນີ້ອາດຈະຈັດຂຶ້ນຢູ່ເຮືອນຂອງທ່ານ, ຫ້ອງການຂອງທ່ານ, ຫຼືສະຖານທີ່ອື່ນໃດໜຶ່ງ ທີ່ເໝາະສົມ.

**ຂໍ້ມູນປະຫວັດສຸຂະພາບ**

ກະລຸນາກະກຽມຕອບຄຳຖາມກ່ຽວກັບປະຫວັດສຸຂະພາບຂອງຄອບຄົວທ່ານ. ຜູ້ຊ່ຽວຊານທາງສຸຂະພາບຈະຖາມທ່ານກ່ຽວກັບການເຈັບປ່ວຍ, ການຜ່າຕັດ, ການກວດສຸຂະພາບ ແລະ ກວດກາຕ່າງໆທີ່ທ່ານມີຜ່ານມາໃນການຮັກສາ ແລະ ການໃຊ້ຢາ. ທ່ານຈະຕ້ອງໃຫ້ຂໍ້ມູນດັ່ງລຸ່ມນນີ້:

•ຊື່/ທີ່ຢູ່ຂອງທ່ານໝໍທຸກທ່ານ/ໂຮງໝໍທຸກແຫ່ງ
•ວັນທີ ແລະ ຈຸດປະສົງໃນການໄປໂຮງໝໍ
•ການກວດພະຍາດ
•ການຮັກສາ
•ການໃຊ້ຢາ

ທຸກຂໍ້ມູນທີ່ທ່ານໃຫ້ແກ່ຜູ້ຊ່ຽວຊານທາງສຸຂະພາບຈະຖືກເກັບໄວ້ເປັນຄວາມລັບຢ່າງເຂັ້ມງວດ. ຂໍ້ມູນນີ້ຈະຖືກສົ່ງໄປຫ້ອງການບໍລິສັດປະກັນໄພເພື່ອໃຊ້ໃນການເຮັດສັນຍາປະກັນໄພເທົ່ານັ້ນ.

**ຄຳຖາມທີ່ມັກຖາມ**
*ເປັນຫຍັງຈຶ່ງກວດຂ້ອຍ?* ນີ້ແມ່ນສ່ວນໜຶ່ງຂອງຄຳຮ້ອງຂໍເຮັດປະກັນໄພ.

*ຈະເສຍຄ່າໃຊ້ຈ່າຍເທົ່າໃດ?* ທ່ານຈະບໍ່ເສຍຄ່າໃຊ້ຈ່າຍໃດໆໃນການກວດນີ້. ບໍລິສັດປະກັນໄພຈະຈ່າຍໃຫ້ ທັງໝົດ.

## ການກວດເລືອດ

ຖ້າມີການກຳນົດໃຫ້ກວດເລືອດ, ອຸປະກອນຂ້າເຊື້ອແລ້ວທີ່ໃຊ້ແມ່ນສະໜອງໃຫ້ເປັນຊຸດກວດ ເລືອດທີ່ໃຊ້ແລ້ວຖິ້ມເລີຍ, ແລະໃຊ້ຄັ້ງດຽວເທົ່ານັ້ນ. ຜູ້ຊ່ຽວຊານທາງດ້ານສຸຂະພາບທີ່ໄດ້ຮັບການຮັບປະກັນຈະເປີດຊຸດເຄື່ອງມື ທີ່ຖືກປິດແລະເຂັມປອດເຊື້ອຕໍ່ໜ້າທ່ານ.

ການກວດເລືອດຈະໃຫ້ຂໍ້ມູນທີ່ສຳຄັນທີ່ບໍລິສັດປະກັນໄພນຳໃຊ້ເພື່ອເຮັດສັນຍາປະກັນໄພກັບທ່ານ. ການກວດເລືອດໃນຫ້ອງທົດລອງຫຼາກຫຼາຍຮູບແບບຈະຖືກດຳເນີນໂດຍຫ້ອງທົດລອງເຊິ່ງຈະສົ່ງຜົນກວດ ຫາ ຫ້ອງການໃຫຍຂອງບໍລິສັດປະກັນໄພ.

ອີງໃສ່ຂໍ້ກຳນົດຂອງບໍ ລິສັດປະກັນໄພ, ທ່ານອາດຈະຖືກຮ້ອງຂໍໃຫ້ອົດອາຫານເປັນເວລາຫຼາຍຊົ່ວໂມງ ກ່ອນທີ່ຈະມີການກວດເລືອດ. ບອກຄູ່ສັນຍາອິດສະຫຼະຖ້າທ່ານມີປະສົບການໃນການເປັນລົມ, ປວດຮາກ, ຫຼື ຊ້ຳໃນລະຫວ່າງການກວດເລືອດ, ຫຼື ຖ້າທ່ານໃຊ້ຢາຈາງເລືອດ ຫຼື ເພີ່ມປະລິມານຂອງການໃຊ້ຢາເອສປາຍຣິນ. ກະລຸນາດື່ມນ້ຳຫຼາຍໆກ່ອນກວດເລືອດ. ພວກເຮົາຈະຮຽກຮ້ອງໃຫ້ທ່ານເຊັນຊື່ໃນໃບອະນຸຍາດ ໃຫ້ດຳເນີນການກວດຕົວຢ່າງເລືອດ ແລະ ນ້ຳຍ່ຽວ.

## ຄວາມຕ້ອງການເພີ່ມເຕີມ

ບໍລິສັດປະກັນໄພອາດຈະມີຄວາມຕ້ອງການ ເພີ່ມເຕີມຕື່ມອີກນອກຈາກການກວດສອບປະຫວັດ ສຸຂະພາບ. ທ່ານຈະໄດ້ຮັບການແຈ້ງຈາກຄູ່ສັນຍາອິດສະຫຼະ ຫຼື ບໍລິສັດກວດສຸຂະພາບເຄື່ອນທີ່ຖ້າຫາກມີຂໍ້ກຳນົດໃດໆ ຄວາມຕ້ອງການເຫຼົ່ານີ້ອາດຈະປະກອບມີ **ການກວດສຸຂະພາບໂດຍທ່ານໝໍທີ່ມີໃບອະນຸຍາດ, ການກວດຫົວໃຈໂດຍ ກະແສໄຟຟ້າ (EKG), ການກວດຄວາມຄຽດ, ກວດຄວາມສາມາດຂອງອະໄວຍະວະທີ່ສຳຄັນ (TVC), ຫຼື ການເອັກຊະເຣໜ້າເອິກ**.

## ກຽມຕົວກ່ອນກວດສຸດຂະພາບ

ທາງລຸ່ມນີ້ແມ່ນເຄັດລັດບາງຢ່າງເພື່ອຫຼີກລ່ຽງການອ່ານຄ່າຄວາມດັນເລືອດສູງ/ຊີບພະຈອນ ແລະ ເພື່ອຮັບປະກັນຜົນການກວດສຸຂະພາບທີ່ດີທີ່ສຸດ:

- ປະຕິບັດຕາມຄຳແນະນຳອົດອາຫານ – ບໍລິສັດປະກັນໄພສ່ວນຫຼາຍກຳນົດໃຫ້ອົດອາຫານ 6-8 ຊົ່ວໂມງ.
- ດື່ມນ້ຳໜຶ່ງຈອກໃຫຍ່ 1 ຊົ່ວໂມງກ່ອນການກວດເພາະມັນຈະເປັນການງ່າຍໃນການເກັບຕົວຢ່າງຍ່ຽວ.
- ພັກຜ່ອນໃຫ້ພຽງພໍ ແລະ ພະຍາຍາມກຳນົດການນັດພົບໃນເວລາຂອງມື້ທີ່ທ່ານມີຄວາມຄຽດນ້ອຍ ທີ່ສຸດ.
- ກິນຢາຢ່າງເປັນປົກກະຕິຕາມໃບສັ່ງຂອງທ່ານໝໍ.
- ເຮັດລາຍການການໃຊ້ຢາທັງໝົດຂອງທ່ານໃນຕອນນນີ້ ແລະ ນຳມາມື້ກວດສຸຂະພາບ. ໃຫ້ໝັ້ນໃຈວ່າລວມທັງການໃຊ້, ຄວາມຖີ່ໃນການໃຊ້ ແລະ ຊື່ໝໍທີ່ອອກໃບສັ່ງຢາເພື່ອປະຢັດເວລາໃນການກວດສຸຂພາບ.
- ກະກຽມບັດສະແດງຕົນຕົວທີ່ມີຮູບພ້ອມ ( ໃບຂັບຂີ່ຍິ່ງດີ) ໄວ້ໃຫ້ພ້ອມ.
- ນຸ່ງເສື້ອຫຼົມ, ເສື້ອແຂນສັ້ນ ຫຼື ເສື້ອແຂນຍາວທີ່ກໍ້ຂຶ້ນງ່າຍ.
- ຫຼີກລ່ຽງເຄື່ອງດື່ມເອລກໍຮອລທຸກຊະນິດຢ່າງໜ້ອຍ 8 ຊົ່ວໂມງກ່ອນການກວດສຸຂະພາບ.
- ຫຼີກລ່ຽງຢາສູບທຸກຮູບແບບ ແລະ ເຄື່ອງດື່ມຄາເເຟອີນຢ່າງໜ້ອຍ 1 ຊົ່ວໂມງກ່ອນການກວດສຸຂະພາບ
- ຫຼີກລ່ຽງການອອກກຳລັງກາຍໜັກຢ່າງໜ້ອຍ 12 ຊົ່ວໂມງກ່ອນການກວດສຸຂະພາບ.
- ຫຼີກລ່ຽງອາຫານທີ່ມີເກືອຫຼາຍຜິດປົກກະຕິຢ່າງໜ້ອຍ24 ຊົ່ວໂມງກ່ອນການກວດສຸຂະພາບ.